


# ການເລົ່າເລື່ອງກ່ຽວກັບພູມ ອາກາດ ແລະ ສິ່ງແວດລ້ອມ

Klassifikationsstufe: Intern

ແມ່ນຫຍັງຄືສິ່ງທີ່ເຮັດໃຫ້
ເລື່ອງພູມອາກາດ ເປັນທີ່ຫນ້າ
ສົນໃຈ ແລະ ເຮັດໃຫ້ຜູ້ຟັງ
ຢາກມີສ່ວນຮ່ວມ?

# ກິດຈະກຳເຮັດວຽກເປັນກຸ່ມ

**ໜ້າທີ:**

- ແບ່ງເປັນ 5 ກຸ່ມ.
- ໃຫ້ຄິດຫາເລື່ອງ ກ່ຽວກັບພູມອາກາດ ທີ່ທ່ານມັກ ແລະ ຈື່ຈຳໄດ້. ຫຼື ຄົ້ນຫາ ເພື່ອທົບທວນຄືນ.

**ສົນທະນາກ່ຽວກັບຄຳຖາມຕໍ່ໄປນີ້:**

- ເປັນຫຍັງທ່ານຈຶ່ງມັກພູມອາກາດແບບນັ້ນ?
- ໃຫ້ບອກຈຸດເດັ່ນພິເສດ ຂອງພູມອາກາດ ທີ່ທ່ານມັກ?.
- ອົງປະກອບທີ່ສຳຄັນໃນການເລົ່າເລື່ອງກ່ຽວກັບ ການປ່ຽນແປງສະພາບດິນຟ້າ ອາກາດ ຄວນປະກອບມີຫັຍງແດ່?
- ມີສິ່ງໃດແດ່ທີ່ເຮັດໃຫ້ ບົດເລື່ອງກ່ຽວກັບພູມອາກາດ ບໍ່ເປັນທີ່ໜ້າຈົດຈຳ?




Klassifikationsstufe: Intern

# ອົງປະກອບທີ່ສຳຄັນຂອງ ບົດເລື່ອງ ພູມອາກາດ



- ເຊື່ອມໂຍງຂໍ້ພິສູດທາງວິທະຍາສາດ ກັບເຫດການທີ່ເກີດຂຶ້ນແທ້ຈິງໃນໂລກ.
- ສະແດງໃຫ້ເຫັນເຖິງຜົນກະທົບຕໍ່ກັບທຳມະຊາດ.
- ສະແດງໃຫ້ເຫັນເຖິງຜົນກະທົບຕໍ່ກັບມະນຸດ.
- ເບິ່ງສາເຫດຂອງຜົນກະທົບທີ່ເກີດຂຶ້ນໃນອະດີດ ລວມໄປເຖິງຜົນກະທົບໃນປັດຈຸບັນ ແລະ ແນວໂນ້ມຂອງຜົນກະທົບທີ່ອາດເກີດຂຶ້ນໃນອະນາຄົດ.
- ສະໜອງການແກ້ໄຂທີ່ສາມາດປະຕິບັດໄດ້ / ການຕອບສະໜອງ / ວິທີການໃນຕໍ່ໜ້າ.

# ບົດເລື່ອງ ທີ່ມີໃຈຄວາມ ຊັບຊ້ອນ ໃຫ້ກາຍເປັນ ສິ່ງທີ່ຮູ້ສຶກວ່າ:

- ເປັນສ່ວນຕົວ.
- ທ້ອງຖິ່ນ.
- ຄວາມກ່ຽວຂ້ອງ.
- ມີແນວທາງໃນການແກ້ໄຂ.



ວິທະຍາສາດ ແລະ ຄວາມເປັນຈິງທີ່ຖືກຕ້ອງ ແມ່ນສຳຄັນ, ແຕ່ທ່ານຈຳເປັນຕ້ອງເຊື່ອມໂຍງຄວາມຮູ້ສຶກກັບຜູ້ຊົມຂອງທ່ານ.



ທ່ານຈະນຳສະເໜີຄວາມເປັນຈິງແນວໃດເພື່ອໃຫ້ຜູ້ຄົນມີຄວາມສົນໃຈ?

ບໍ່ຄວນເວົ້າກວ້າງເກີນໄປ.



ຄວນຈຳກັດຈຸດສຸມຂອງທ່ານໃຫ້ແຄບລົງ.

# ຫົວຂໍ້ ຫລື ເລື່ອງລາວ? ກວ້າງ ຫລື ຈຸດສຸມ?

ພາຍຸຮຸນແຮງ.

ພືດຜົນລະປູກ ຂອງຊຸມຊົນຢູ່ເຂດທົ່ງພຽງຊົນນະບົດ ຖືກຜົນກະທົບຈາກໄພນໍ້າຖ້ວມ.

ອາຍຜິດເຮືອນແກ້ວ.

ນະໂຍບາຍກ່ຽວກັບພູມອາກາດ ຂອງ ສປປ ລາວ.

ເຖິງວ່າຈະມີການເຕືອນຈາກນັກວິທະຍາສາດ, ແຕ່ການປ່ອຍ ອາຍກາສ CO2 ໃນອາຊີຕາເວັນອອກສຽງໃຕ້ ຍັງເພີ່ມຂຶ້ນເລື້ອຍໆ ຍ້ອນມີການເພີ່ມຂຶ້ນຂອງໂຮງງານໄຟຟ້າຖ່ານຫີນ.

ສປປ ລາວ ແລະ ອົງກິດ ໄດ້ລົງນາມໃນຂໍ້ຕົກລົງ ເພື່ອຊຸກຍູ້ຄວາມພະຍາຍາມໃນຫຼຸດການປ່ອຍອາຍກາສ CO2.

Klassifikationsstufe: Intern

# ນ້ຳຖ້ວມ ຢູ່ ປະເທດປາກິສະຖານ.




ຊາວປາກິສະຖານ ຕ້ອງພະຍາຍາມຟື້ນຟູສິ່ງທີ່ເສຍຫາຍຫຼັງຈາກນ້ຳຖ້ວມ.

Klassifikationsstufe: Intern

# ນ້ຳຖ້ວມ ຢູ່ ປະເທດປາກິສະຖານ: ການປ່ຽນແປງສະພາບ ດິນຟ້າອາກາດ ອາດເຮັດໃຫ້ຜົນກະທົບຮຸນແຮງຂຶ້ນ.



# ເຄັດລັບ ໃນການຂຽນບົດ ເລື່ອງເລົ່າ ກ່ຽວກັບ ພູມອາກາດ ໃຫ້ດີຂຶ້ນ.

Klassifikationsstufe: Intern

# ຮູ້ຈັກຜູ້ຊົມຂອງທ່ານ.

- **ໃຜແມ່ນຜູ້ອ່ານ / ຜູ້ຟັງ / ຜູ້ເບິ່ງ ຂອງທ່ານ?**
- **ພວກເຂົາຮູ້ກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດຫຼາຍໜ້ອຍພຽງໃດ?**
- **ພວກເຂົາສົນໃຈກ່ຽວກັບຫຍັງ?**
- **ພວກເຂົາອາດຈະໄດ້ຮັບຜົນກະທົບຕໍ່ກັບເຂົາເຈົ້າເອງແນວໃດ?**



Klassifikationsstufe: Intern

# ຄວາມຮັບຮູ້ກ່ຽວກັບການ ປ່ຽນແປງສະພາບດິນຟ້າ ອາກາດ ຢູ່ໃນ ສປປ ລາວ.

- 7% ຮູ້ຫຼາຍ
- 26% ຮູ້ປານກາງ

- 47% ຮູ້ໜ້ອຍດຽວ
- 18% ບໍ່ຮູ້ເລີຍ




https://climatecommunication.yale.edu/publications/international-public-opinion-on-climate-change-2023/



# ຄຳຕອບອື່ນໆທີ່ກ່ຽວກັບ ສປປ ລາວ.

ທ່ານຄິດວ່າການປ່ຽນແປງສະພາບດິນຟ້າອາກາດກຳລັງເກີດຂຶ້ນ ຫຼື ບໍ່?

- 71% ແມ່ນ
- 4% ບໍ່
- 24% ບໍ່ຮູ້

ທ່ານກັງວົນຕໍ່ກັບການປ່ຽນແປງສະພາບດິນຟ້າອາກາດຫຼາຍໜ້ອຍປານໃດ?

- 30% ກັງວົນຫຼາຍ
- 41% ກັງວົນໜ້ອຍໜຶ່ງ
- 19% ບໍ່ຄ່ອຍກັງວົນ
- 8% ບໍ່ກັງວົນເລີຍ

ການປ່ຽນແປງສະພາບດິນຟ້າອາກາດຈະສ້າງຜົນກະທົບຕໍ່ບຸກຄົນ ຫຼື ບໍ່?

- 37% ມີຜົນກະທົບຫຼາຍ
- 33% ມີຜົນກະທົບປານກາງ
- 12% ມີຜົນກະທົບໜ້ອຍໜຶ່ງ
- 5% ບໍ່ມີຜົນກະທົບເລີຍ

https://climatecommunication.yale.edu/publications/international-public-opinion-on-climate-change-2023/

# ລະບຸຄຳສັບສະເພາະຂອງທ້ອງຖິ່ນນັ້ນໆ.

- ທ່ານຮູ້ບໍ່ວ່າ Athropocene, decarbonization, UNFCCC ໝາຍເຖິງຫຍັງ?
- **ຜູ້ຊົມຂອງທ່ານອາດບໍ່ຮູ້.**
- ຖາມແຫຼ່ງທີ່ມາຂອງຂໍ້ມູນເພື່ອຊ່ວຍໃຫ້ເຂົ້າໃຈງ່າຍ.
- ຖ້າທ່ານບໍ່ເຂົ້າໃຈ, ຂໍໃຫ້ພວກເຂົາອະທິບາຍຄືນໃໝ່ອີກຄັ້ງ.



## ເປົ້າໝາຍ: ຄວາມເຂົ້າໃຈ

Klassifikationsstufe: Intern

# ເຮັດຂຶ້ນມາເພື່ອ ແລະ ກ່ຽວກັບຜູ້ຄົນ.



- ເອົາຄົນເປັນໃຈກາງ.
- ເຮັດໃຫ້ບົດເລື່ອງຫຍໍ້ມີຄວາມເປັນຈິງ ແລະ ມີຄວາມກ່ຽວຂ້ອງກັນ.
- ປັບເອົາບັນຫາເລື່ອງມະຫາພາກ ໃຫ້ມາເປັນເລື່ອງໃນລະດັບທ້ອງຖິ່ນ.
- ໃສ່ຂໍ້ມູນຕ່າງໆທີ່ຜູ້ຊົມຈະເຂົ້າໃຈໄດ້ງ່າຍ: *(ລາຄາ ເຂົ້າຈີ່, ນໍ້າມັນ, ເຂົ້າ...)*

# ການເນື້ອເລື່ອງ ແລະ ມີລັກສະນະ ທີ່ໜ້າສົນໃຈ

## Migrants face changing climate

PUBLISHED : 1 JUL 2018 AT 05:22

NEWSPAPER SECTION: SPECTRUM
WRITER: PARITTA WANGKIAT

1 2



taking stock: Farmers harvest hay in dry season and store it for feeding animals in Kang Meas district, Kampong Cham province, Cambodia. In recent years, farmers have experienced extreme weather — one of several factors that lower yields in rice farming. Many farmers migrate from villages seeking better economic opportunities in cities. Thailand is one of the most popular destinations.

- UNHCR ກ່າວວ່າ 20 ກວ່າລ້ານຄົນ ຕ້ອງໄດ້ ຍົກຍ້າຍອອກຈາກທີ່ພັກອາໄສ ເນື່ອງຈາກການ ປ່ຽນແປງສະພາບດິນຟ້າອາກາດໃນແຕ່ລະປີ.
- ແຕ່ຂໍ້ມູນບົດເລື່ອງ ທີ່ເປັນຮູບແບບທາງດ້ານ ສະຖິຕິ ແມ່ນເຮັດໃຫ້ມີຄວາມສັບສົນໄດ້.
- ໃຫ້ເລົ່າເລື່ອງຂອງຄອບຄົວໃດໜຶ່ງກໍພຽງພໍແລ້ວ.

Klassifikationsstufe: Intern

# ອ້າງອີງເຖິງ ຄໍາເວົ້າທີ່ແຕກຕ່າງກັນ ມາສົນທະນາ.

- ສົນທະນາກັບຜູ້ຊ່ຽວຊານ ແລະ ຜູ້ສ້າງນະໂຍບາຍ.
- ແມ່ນໃຜໄດ້ຮັບຜົນກະທົບໂດຍກົງ? ແມ່ນໃຜທີ່ມີທັດສະນະ ທີ່ແຕກຕ່າງກັນ?
- ຄິດກ່ຽວກັບ ເພດ ແລະ ລຸ້ນຕໍ່ໆໄປ.
- ຄວາມຫຼາກຫຼາຍຂອງສຽງ (ຂໍ້ມູນ) ເຮັດໃຫ້ບົດເລື່ອງມີຄວາມລະອຽດ ແລະ ອຸດົມສົມບູນຂຶ້ນ.

# ການໃຊ້ຮູບພາບ.




- ຫຼຸດຜ່ອນຄວາມສັບສົນ ໂດຍການໃຊ້ຮູບພາບປະກອບ ເພື່ອອະທິບາຍໃຫ້ເຂົ້າໃຈງ່າຍຂຶ້ນ.
- ໃຫ້ຖາມຕົວເອງສະເໝີວ່າ: “ເຮັດແນວໃດ ເຮົາຈິ່ງຈະສາມາດເຫັນຮູບພາບນີ້?"
- ຮູບພາບ, ວີດີໂອ, ກຣາຟ/ແຜນຜັງ, ພາບແຕ້ມ, ແຜນທີ່, ແຖບທາງຂ້າງ.



Klassifikationsstufe: Intern

# ຊອກຫາຮູບພາບທີ່ດີ ເພື່ອນໍາມາເປັນຮູບພາບເລີ່ມຕົ້ນ.





# ການສະແດງພາບຂໍ້ມູນ.

**Observed Average Seasonal Mean Temperature**

The identified sub-national units with the highest and lowest me

| | 1991-2020 | | | |
|---|---|---|---|---|
| Units: °C | DJF | MAM | JJA | SON |
| Country: Philippines | 25.07 | 26.86 | 26.47 | 26.13 |
| Highest: Region V (Bicol region) | 25.82 | 27.60 | 27.97 | 27.28 |
| Lowest: Cordillera Administrative region (CAR) | | | | |

- ນໍາສະເໜີຂໍ້ມູນທີ່ສັບສົນ ໃຫ້ເປັນຮູບແບບທີ່ເຂົ້າໃຈງ່າຍ.
- ດຶງດູດຄວາມສົນໃຈຈາກຜູ້ອ່ານຫຼາຍຂຶ້ນ.
- ຊ່ວຍໃຫ້ເຫັນພາບລວມທີ່ກວ້າງຂຶ້ນ.




Klassifikationsstufe: Intern

# ເຮັດວຽກເປັນກຸ່ມ – ເຮັດໃຫ້ງ່າຍ ແລະ ມີລາຍລະອຽດ ທີ່ກ່ຽວກັບຄົນ.

- ເຮັດວຽກພາຍໃນກຸ່ມ .
- ລອງພິຈາລະນາເລື່ອງທີ່ສັບສົນເຫຼົ່ານີ້, ເລືອກກຸ່ມເປົ້າຫມາຍ, ຂຽນປະໂຫຍກສັ້ນໆ ທີ່ເຂົ້າໃຈງ່າຍ ແລ້ວບອກໃຫ້ພວກເຮົາຮູ້ວ່າ ທ່ານຈະສົນທະນາກັບໃຜ ແລະ ທ່ານຈະໃຫ້ຄວາມສໍາຄັນກັບຜູ້ຄົນແນວໃດ?




Klassifikationsstufe: Intern

# ເຮັດວຽກເປັນກຸ່ມ – ເຮັດໃຫ້ງ່າຍ ແລະ ມີລາຍລະອຽດ ທີ່ກ່ຽວກັບຄືນ

**ກຸ່ມ 1:** **ບັນດາຜູ້ແທນທີ່ກອງປະຊຸມ COP29 ຈະປຶກສາຫາລືກ່ຽວກັບ ຄວາມຍຸຕິທຳ ຂອງພູມອາກາດ ຢູ່ໃນຍຸກ ແອນໂທຣໂປຊີນ (ຍຸກທີ່ມະນຸດ ຈະເລີນຮຸ່ງເຮືອງ ແລະ ສ້າງຜົນກະທົບຕໍ່ກັບໂລກ). ດັ່ງນັ້ນ, ຈຶ່ງໄດ້ຮັບ ມອບໝາຍ ໃຫ້ເຮັດການແຍກລະຫວ່າງ ການຈະເລີນເຕີບໂຕທາງດ້ານ ເສດຖະກິດ ແລະ ສິ່ງແວດລ້ອມ ເພື່ອເຮັດໃຫ້ເປັນການພັດທະນາ ເສດຖະກິດທີ່ມີຄວາມຍືນຍົງໃນອະນາຄົດ.**

**ກຸ່ມ 2:** **ການສຶກສາຄົ້ນຄວ້າທ່າແຮງຂອງ ສປປ ລາວ ໃນການດຳເນີນ ໂຄງການ ກັກເກັບກາສ ກາກໂບນິກ (CO2) ເພື່ອຫຼຸດຜ່ອນການປ່ຽນແປງ ສະພາບດິນຟ້າອາກາດ. ມີການວາງແຜນໂຄງການປູກປ່າ ພ້ອມທັງການ ເຮັດກະສິກຳໃນພື້ນທີ່ປ່າ ທີ່ອາດຈະຊ່ວຍໃຫ້ຊຸມຊົນໃນທ້ອງຖິ່ນສາມາດ ເຮັດການປູກຝັງ ແລະ ເກັບກ່ຽວຜົນລະປູກໄດ້ຢ່າງຍືນຍົງ.**



# ຈາກ ລະດັບທ້ອງຖິ່ນ ສູ່ ລະດັບໂລກ / ຈາກ ລະດັບໂລກ ສູ່ ລະດັບທ້ອງຖິ່ນ.



# ຈາກ ລະດັບທ້ອງຖິ່ນ ສູ່ ລະດັບໂລກ.

ຖ້າຫາກເລື່ອງ ແມ່ນຢູ່ໃນລະດັບທ້ອງຖິ່ນ, ຈະຕ້ອງເຮັດໃຫ້ມັນຢູ່ໃນບໍລິບົດ ທີ່ໃຫຍ່ກວ່ານັ້ນ ເຊັ່ນ:

- ເລື່ອງນີ້ກ່ຽວຂ້ອງກັບບັນຫາລະດັບມະຫາພາກໄດ້ແນວໃດ?
- ເລື່ອງນີ້ກ່ຽວຂ້ອງກັບເຫດການທີ່ຄ້າຍຄືກັນໃນພາກພື້ນ ຫຼື ທົ່ວໂລກ ໄດ້ແນວໃດ?
- ສາເຫດ / ຜົນກະທົບ ແມ່ນຢູ່ນອກເຫນືອຈາກໃນພື້ນທີ່ລະດັບທ້ອງຖິ່ນ ຫຼື ບໍ່?



GLOBAL IDEAS

# The ecological roots of India's farming crisis

The storming of the Red Fort in Delhi marked a dramatic escalation to months of protest to new farm laws. Could a more sustainable form of agriculture be part of the solution?




For months, farmers have been blocking highways and gathering in New Delhi to protest agricultural reforms

- ຂະຫຍາຍເລື່ອງລາວໃນລະດັບທ້ອງຖິ່ນ ໄປສູ່ການເລົ່າເລື່ອງທີ່ກວ້າງຂວາງຂຶ້ນ ກ່ຽວກັບນະໂຍບາຍ ແລະ ພູມອາກາດ.

- ສຶກສານະໂຍບາຍພາຍໃນປະເທດ, ຜົນກະທົບຕໍ່ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ການຂາດແຄນນ້ຳ, ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ.

# ຈາກ ລະດັບໂລກ ສູ່ ລະດັບທ້ອງຖິ່ນ.

ໃຫ້ພິຈາລະນາຫົວຂໍ້ ການປ່ຽນແປງສະພາບດິນຟ້າອາກາດໂດຍທົ່ວໄປກ່ອນ. ບາງທີອາດມີການສຶກສາ ໃໝ່ຈາກຄະນະກຳມະການລະຫວ່າງລັດຖະບານ ວ່າດ້ວຍການປ່ຽນແປງສະພາບດິນຟ້າອາກາດ (IPCCC) ຫຼື ຄຳຖະແຫຼງການ ຈາກກອງປະຊຸມ COP.




**ລະບຸບັນຫາໃນລະດັບທ້ອງຖິ່ນ:**

- **ບັນຫານັ້ນ ມີຜົນກະທົບຕໍ່ຊຸມຊົນໃນລະດັບທ້ອງຖິ່ນແນວໃດ?**
- **ໜ່ວຍງານລະດັບທ້ອງຖິ່ນ ໄດ້ດຳເນີນການຮັບມື/ແກ້ໄຂແນວໃດຕໍ່ກັບບັນຫານີ້?**

# ບົດທົດສອບ!

Klassifikationsstufe: Intern

# ພາຍຸ ແລະ ການຍ້າຍຖິ່ນຖານ.



ທ່ານເປັນນັກຂ່າວ ຂອງໜັງສືພິມແຫ່ງໜຶ່ງ ໃນແຂວງ ສະຫວັນນະເຂດ, ເຊິ່ງຢູ່ທີ່ນັ້ນ ໄດ້ມີພາຍຸຮ້າຍແຮງພັດເຂົ້າມາ ເຮັດໃຫ້ປະຊາຊົນຈຳນວນຫຼວງຫຼາຍ ຕ້ອງໄດ້ຖືກຍົກຍ້າຍໄປຢູ່ໃນເຂດຫ່າງໄກສອກຫຼີກ. ບັນນາທິການຂອງທ່ານ ຕ້ອງການໃຫ້ທ່ານເລົ່າເລື້ອງ ແລະ ລົມກັບຄອບຄົວຜູ້ໄດ້ຮັບຜົນກະທົບ.

# ພາຍຸ ແລະ ການຍ້າຍຖິ່ນຖານ.

ທ່ານຈະລາຍງານເລື່ອງນີ້ແນວໃດ? ເນື້ອຫາຫລັກຂອງທ່ານຄວນແມ່ນຫຍັງ? ທ່ານຈະລົມກັບໃຜ?



ທ່ານອາດຈະລວມອົງປະກອບໃດໜຶ່ງ ເພື່ອເຮັດໃຫ້ເລື່ອງນັ້ນເຂົ້າໃຈໄດ້ງ່າຍ ແລະ ກ່ຽວຂ້ອງກັບຜູ້ອ່ານໄດ້ຫຼາຍຂຶ້ນ.

# ວິທີການຊອກຫາ ເລື່ອງລາວກ່ຽວກັບບັນຫາສີຂຽວ.

- ຕິດຕາມແນວໂນ້ມ ພູມອາກາດ ແລະ ການຄົ້ນຄວ້າທັງໃນລະດັບທ້ອງຖິ່ນ ແລະ ລະດັບໂລກ.
- ຕິດຕໍ່ພົວພັນ ກັບກຸ່ມທີ່ເຮັດກ່ຽວກັບສິ່ງແວດລ້ອມ ແລະ ພູມອາກາດ.
- ເຂົ້າຮ່ວມກອງປະຊຸມ ແລະ ກອງປະຊຸມສຸດຍອດດ້ານສິ່ງແວດລ້ອມ.
- ຕິດຕາມການເຄື່ອນໄຫວ ກ່ຽວກັບນະໂຍບາຍ ແລະ ກິດຈະກໍາຂອງລັດຖະບານ.
- ລົງຍ້ຽມຢາມຊຸມຊົນໃນຂັ້ນທ້ອງຖິ່ນ.
- ນໍາໃຊ້ສື່ສັງຄົມອອນລາຍໃນການຊອກຫາຂໍ້ມູນ.




Klassifikationsstufe: Intern

# ຂໍຂອບໃຈ




Klassifikationsstufe: Intern